# Mekong River Commission

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263 Facsimile: (856-21) 263 264
Email: mrcs@mrcmekong.org Website: www.mrcmekong.org

## *ບົດອອກຂ່າວ*

ເລກທີ: MRC No. 02/07

### *ປະເທດແຟງລັງໃຫ້ທຶນຊ່ວຍເຫລືອເຂົ້າໃນການວາງແຜນພັດທະນາອ່າງແມ່ນ້ຳຂອງ ຈຳນວນ 8,7 ລ້ານ ໂດລາ ສະຫະລັດ ໂດຍຜ່ານການຊ່ວຍເຫລືອຄະນະກຳມາທິການແມ່ນ້ຳຂອງສາກົນ*

**ວຽງຈັນ, ສປປ ລາວ**
**ວັນທີ 8 ກຸມພາ 2007**

ໃນມື້ນີ້ ທາງຄະນະກຳມາທິການແມ່ນ້ຳຂອງສາກົນ (ຄກມສ) ແລະລັດຖະບານປະເທດແຟງລັງໄດ້ຮ່ວມກັນລົງນາມ ເຊັນຂໍ້ຕົກລົງຊ່ວຍເຫລືອສຳລັບການວາງແຜນພັດທະນາອ່າງແມ່ນ້ຳຂອງ ດ້ວຍເງິນມູນຄ່າ 6.728.010 ເອີໂຣ (8,679 ລ້ານໂດລາສະຫະລັດ) ໂດຍຜ່ານແຜນງານການຄຸ້ມຄອງລະບົບຂໍ້ມູນຂ່າວສານ ແລະຄວາມຮູ້ (ຜຄຂຄ) ສະບັບໃໝ່ ຂອງ ຄກມສ.

ຂໍ້ຕົກລົງໃຫ້ທຶນຊ່ວຍເຫລືອໃໝ່ນີ້ (ຊຶ່ງມີໄລຍະເວລາ 4 ປີ) ໄດ້ຖືກເຊັນຮ່ວມກັນລະຫວ່າງ ພະນະທ່ານ Lars Backstrom, ເອກອັກຄະລັດຖະທູດປະເທດແຟງລັງປະຈຳປະເທດໄທ, ກຳປູເຈຍ, ສປປ ລາວ ແລະມຽນມ້າ ແລະ ທ່ານ ດຣ. Olivier Cogels, ຫົວໜ້າຝ່າຍບໍລິຫານປະຈຳກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ປະຈຳ ສຳນັກງານໃຫ່ຍ, ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ທີ່ວຽງຈັນ.

ຂໍ້ຕົກລົງດັ່ງກ່າວມີຈຸດປະສົງແນໃສ່ຊ່ວຍເຫລືອສະໜັບສະໜູນ ຜຄຂຄ ໂດຍຈະເນັ້ນໜັກໃສ່ວຽກງານທີ່ກ່ຽວພັນກັບ ການວາງແຜນພັດທະນາອ່າງແມ່ນ້ຳຂອງ. ຜຄຂຄ ໄດ້ອອກແບບເພື່ອອຳນວຍຄວາມສະດວກໃຫ້ສາມາດເຂົ້າເຖິງ ແລະນຳ ໃຊ້ບັນດາຂໍ້ມູນ, ຂໍ້ມູນຂ່າວສານ ແລະບັນດາເຄື່ອງມືສະໜັບສະໜູນໃນການຕັດສິນບັນຫາ ຊຶ່ງເຫັນວ່າມີ ຄວາມຈຳເປັນສຳລັບການຊຸກຍູ້ສົ່ງເສີມ ແລະປະສານງານໃນການພັດທະນາແມ່ນ້ຳ ແລະແຫລ່ງຊັບພະຍາກອນ ພາຍໃນອ່າງແມ່ນ້ຳຂອງ ແບບຍືນຍົງ. ແຜນງານນີ້ຈະຊ່ວຍໃຫ້ສາມາດແລກປ່ຽນ ແລະນຳໃຊ້ຂໍ້ມູນກ່ຽວກັບ ແຫລ່ງ ຊັບພະຍາກອນທາງນ້ຳ, ນ້ຳວິທະຍາ (Hydrology) ແລະອຸຕຸນິຍົມວິທະຍາຮ່ວມກັນ ຕະຫລອດເຖິງການນຳໃຊ້ ແຫລ່ງຊັບພະຍາກອນຕ່າງໆທັງໝົດທີ່ຈຳເປັນສຳລັບການປະຕິບັດງານພາຍໃນແຜນງານຂອງ ຄກມສ ເຊັ່ນ: ການ ຄຸ້ມຄອງຖານຂໍ້ມູນທີ່ມີຄຸນນະພາບສູງ ແລະແບບເຊື່ອມຍົງ ພາຍໃນ ຄກມສ (MRCIS databases) ແລະ ຄວາມ ອາດສາມາດໃນການວິເຄາະ ແລະແປຜົນຂອງຂໍ້ມູນດັ່ງກ່າວ.
ໜຶ່ງໃນບັນດາເຄື່ອງມືຂອງແຜນງານ ທີ່ຖືວ່າມີປະສິດທິພາບສູງ ໄດ້ແກ່ ຂອບສະໜັບສະໜູນການຕັດສິນບັນຫາ (Decision Support Framework - DSF) - ທີ່ເປັນລະບົບອາໃສເຄື່ອງຄອມພິວເຕີເປັນຫົວໃຈສຳຄັນ ຊຶ່ງຈະເຮັດ ໃຫ້ ຄກມສ ສາມາດປະເມີນ-ກວດສອບຜົນກະທົບ (ຈາກການປ່ຽນແປງທາງດ້ານປະລິມານ ແລະຄຸນນະພາບຂອງ ການໄຫລຂອງນ້ຳໃນລະບົບອ່າງແມ່ນ້ຳຂອງຕອນລຸ່ມ) ຕໍ່ກັບສະພາບແວດລ້ອມ ແລະເສດຖະກິດ-ສັງຄົມ ອັນເນື່ອງ

ມາຈາກສະພາບການພາຍໃນອ່າງແມ່ນ້ຳຂອງມີການປ່ຽນແປງ. ການວາງແຜນອ່າງແມ່ນ້ຳຂອງແບບນີ້ ຈະມີ ຄວາມໝາຍສຳຄັນຍິ່ງ ຖ້າບັນດາປະເທດສະມະຊິກຂອງ ຄກມສ ເຊັ່ນ: ກຳປູເຈຍ, ສປປ ລາວ, ໄທ ແລະຫວຽດນາມ ຫາກຕັດສິນໃຈ ຮ່ວມກັນພັດທະນາອ່າງແມ່ນ້ຳຂອງ ໃຫ້ເປັນແບບຍືນຍົງ.

ທ່ານ ດຣ. Cogels ໄດ້ສະແດງຄວາມຂອບໃຈມາຍັງລັດຖະບານປະເທດແຟງລັງ ທີ່ໄດ້ໃຫ້ການຊ່ວຍເຫລືອຢ່າງ ຕໍ່ເນື່ອງເຂົ້າໃນວຽກງານຂອງ ຄກມສ ແລະທ່ານຍັງໄດ້ກ່າວວ່າ: “ແຟງລັງເປັນປະເທດທີ່ໃຫ້ການຊ່ວຍເຫລືອ ຄກມສ ມາເປັນເວລາດົນນານມາແລ້ວ ໂດຍໄດ້ສະໜັບສະໜູນ-ຊ່ວຍເຫລືອແຜນງານການນຳໃຊ້ແຫລ່ງນ້ຳ ຊຶ່ງເປັນແຜນ ງານທີ່ໄດ້ທຳການສຶກສາໃນແງ່ນ້ຳວິທະຍາພາຍໃນອ່າງແມ່ນ້ຳຂອງ ແລະພາຍໃນທະເລສາບຍັກ Tonle Sap ຜ່ານ ມາແລ້ວ ລວມທັງການສຶກສາໂດຍອາໃສຮູບແບບທາງຄະນິດສາດ (Modeling) ຈາກທາງທີ່ປຶກສາຊັ້ນອາວຸໂສ”.

“ປະເທດແຟງລັງເຂົ້າໃຈເຖິງຄວາມສຳຄັນຂອງ ຄກມສ ທີ່ຈະຕ້ອງມີພື້ນຖານຄວາມຮູ້-ຄວາມເຂົ້າໃຈໃນລະດັບທີ່ເຊື່ອ ຖືໄດ້ ເພື່ອສາມາດໃຫ້ຂໍ້ມູນຂ່າວສານທີ່ຖືກຕ້ອງໃຫ້ແກ່ບັນດາປະເທດສະມະຊິກ ເພື່ອປະກອບສ່ວນເຂົ້າໃນການພັດ ທະນາອ່າງແມ່ນ້ຳຂອງ ແລະແຫລ່ງຊັບພະຍາກອນທາງນ້ຳຂອງຕົນເອງແບບຍືນຍົງ ແນໃສ່ລຸດຜ່ອນຄວາມທຸກຍາກ. ທາງ ຄກມສ ໄດ້ສ້າງພື້ນຖານອັນແຂງແກ່ນສຳລັບຖານຂໍ້ມູນທີ່ມີຢູ່ໃນປະຈຸບັນຂອງຕົນເອງເປັນທີ່ຮຽບຮ້ອຍແລ້ວ, ແຕ່ໃນປະຈຸບັນ ພວກເຮົາຍັງຈະຕ້ອງສືບຕໍ່ສ້າງຖານດັ່ງກ່າວຕື່ມອີກ ຖ້າພວກເຮົາຢາກປະສົບຜົນສຳເລັດ ໃນການວາງແຜນສຳລັບອ່າງແມ່ນ້ຳຂອງໃນໄລຍະຍາວ ຊຶ່ງຈະເປັນປະໂຫຍດສຳລັບປະຊາຊົນທີ່ອາໃສຢູ່ພາຍໃນ ອ່າງດັ່ງກ່າວ ແລະໃນຂະນະດຽວກັນ ກໍ່ຕ້ອງຮັບປະກັນໃຫ້ມີຄວາມສົມດຸນທາງດ້ານນິເວດວິທະຍາ ເຊັ່ນກັນ ”

ພະນະທ່ານ ນາງ Marjatta Rasi, ຮອງລັດຖະມົນຕີຝ່າຍການຮ່ວມມືດ້ານພັດທະນາປະເທດແຟັງລັງ ກ່າວວ່າ: ລັດຖະ ບານປະເທດແຟງລັງມີຄວາມຍິນດີເປັນຢ່າງຍິ່ງ ທີ່ໄດ້ມີບົດບາດເປັນຜູ້ນຳໃນການວາງແຜນພັດທະນາແບບຍືນຍົງ ພາຍໃນອ່າງແມ່ນ້ຳຂອງດັ່ງກ່າວ.

“ພວກເຮົາເຂົ້າໃຈດີວ່າ: ຖ້າພວກເຮົາຢາກລຸດຜ່ອນຄວາມທຸກຍາກ ແລະຢາກປັບປຸງມາດຖານດ້ານສັງຄົມ ແລະເສດ ຖະກິດພາຍໃນເຂດອ່າງແມ່ນ້ຳຂອງດັ່ງກ່າວ, ມັນມີຄວາມຈຳເປັນຢ່າງຍິ່ງ ທີ່ພວກເຮົາຈະຕ້ອງມີການນຳໃຊ້ແຫລ່ງ ຊັບພະຍາກອນພາຍໃນອ່າງດັ່ງກ່າວ ຢ່າງຖືກຕ້ອງເໝາະສົມ” ທ່ານ ກ່າວຢ້ຳຕື່ມອີກ.

“ແຕ່ພວກເຮົາກໍ່ຮູ້ດີວ່າ: ໃນທຸກໆການພັດທະນາ ຈະຕ້ອງມີການພິຈາລະນາຢ່າງຮອບຄອບໃນທຸກໆດ້ານ ຖ້າພວກ ເຮົາຢາກຮັບປະກັນໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມໜ້ອຍທີ່ສຸດ. ນີ້ເປັນທີ່ມາສຳລັບການວາງແຜນພາຍໃນອ່າງ ແມ່ນ້ຳຂອງ ແລະພວກເຮົາກໍ່ຫວັງວ່າ ການປະກອບສ່ວນຂອງພວກເຮົາເຂົ້າໃນວຽກງານຂອງ ຄກມສ ຈະແຕກດອກ ອອກຜົນ ໄປໃນທາງທີ່ສ້າງສັນ ແລະຍືນຍົງຕະຫລອດໄປ”


- ສຳລັບຂໍ້ມູນລະອຽດເພີ້ມເຕີມ ທ່ານສາມາດພົວພັນ ກັບ ທ່ານ ເວີຈີເນຍ ແອັດດີເຊີນ, ພະນັກງານຝ່າຍສື່ສານ, ໂທລະສັບ: 856 21 263 263 ຕໍ່ 4703. ມືຖື: (856) 20 559 9139<br>ແຟກ: **(85621) 263 264** ອີເມລ: virginia@mrcmekong.org